□□□□□□□□ □□□□□□□□□□□□ □□□□ □□□□: □□□□□□□□□□□□

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເລກທີ 1914/ຫສນຍ
ນະຄອນຫຼວງວຽງຈັນ, ວັນທີ 23 ທັນວາ 2022

ແຈ້ງການ

ອ້າງເຖິງ : - ບັນດາທ່ານ ລັດຖະມົນຕີກະຊວງ, ຫົວໜ້າອົງການທຽບເທົ່າ ທີ່ນັບຖື.
- ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານເຈົ້າແຂວງທົ່ວປະເທດ ທີ່ນັບຖື.

ເລື່ອງ : ທິດຊີ້ນຳກ່ຽວກັບມາດຕະການໃນການເຂົ້າ-ອອກ ສປປ ລາວ ໃນໄລຍະມີການລະບາດຂອງພະຍາດໂຄວິດ-19.

- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ສະບັບເລກທີ 574/ຫສນຍ, ລົງວັນທີ 28 ກັນຍາ 2021;
- ອີງຕາມ ສະພາບຄວາມເປັນຈິງ ໃນການປະຕິບັດນະໂຍບາຍໃນການເຂົ້າ-ອອກ ປະເທດຂອງບັນດາປະເທດພາກພື້ນ ແລະ ສາກົນ.
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີ ຂອງຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການແຜ່ລະບາດຂອງພະຍາດໂຄວິດ-19.
- ອີງຕາມ ຜົນຂອງກອງປະຊຸມລັດຖະບານ ສະໄໝສາມັນ ປະຈຳເດືອນພະຈິກ ຄັ້ງວັນທີ 21-22 ພະຈິກ 2022.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງການຕົກລົງ ແລະ ຊີ້ນຳ ຂອງລັດຖະບານມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດ ດັ່ງນີ້: **ເຫັນດີໃຫ້ລົບລ້າງການນຳໃຊ້ໃບຢັ້ງຢືນສັກວັກຊີນຄົບໂດສ ແລະ ລົບລ້າງການກວດຫາເຊື້ອໂຄວິດ-19 ດ້ວຍເຄື່ອງກວດແບບໄວ (ATK) ພາຍໃນ 48 ຊົ່ວໂມງ ກ່ອນອອກຈາກປະເທດຕົ້ນທາງ ຂອງຜົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ຈະເດີນທາງເຂົ້າມາ ສປປ ລາວ.**

<u>ໝາຍເຫດ</u> : ແຈ້ງການສະບັບນີ້ ປ່ຽນແທນເນື້ອໃນ ຂໍ້ 4) ຂອງຂໍ້ 1 ຂອງແຈ້ງການ ສະບັບເລກທີ 627/ຫສນຍ, ລົງວັນທີ 07 ພຶດສະພາ 2022.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີ,
ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ອາລຸນໄຊ ສຸນນະລາດ

<u>ປອບປ່າສີ:</u>

1. ນາຍົກ-ຮອງນາຍົກລັດຖະມົນຕີ (ທ່ານລະ) 01 ສະບັບ;
2. ຫ້ອງວ່າການສຸນກາງພັກ 01 ສະບັບ;
3. ຫ້ອງວ່າການສຳນັກງານປະທານປະເທດ 01 ສະບັບ;
4. ຄະນະເລຂາທິການສະພາແຫ່ງຊາດ 01 ສະບັບ;
5. ອົງການແນວລາວສ້າງຊາດ 01 ສະບັບ;
6. ບັນດາອົງການຈັດຕັ້ງພັກ, ປອບລະ 01ສະບັບ;
7. ບັນດາອົງການຈັດຕັ້ງມະຫາຊົນ (ປອບລະ) 01 ສະບັບ;
8. ຄະນະບຳ ຫສນຍ (ທ່ານລະ) 01 ສະບັບ;
9. ສຳເນົາ 01 ສະບັບ.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ບ້ານເວຍ, ນະຄອນຫຼວງ-1 ໂທ: 021 214966 PKD